

ລາວຍືນຍາວ

# Lasting Laos

## ໂຄງການ SUSTOUR ລາວ

### ຊຸດຂໍ້ມູນສຳລັບພາກທຸລະກິດ

switchasia GRANTS PROGRAMME

Co-funded by the European Union

Travelife Sustainability in tourism

ECEAT European Centre for Eco Agro Tourism

PLAN INTERNATIONAL

LNCCI

MOIC

# ກ່ຽວກັບໂຄງການ SUSTOUR ລາວ

**ໂຄງການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃຫ້ສາມາດເຊື່ອມຕໍ່ກັບຕະຫຼາດໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວແບບຍືນຍົງ (SUSTOUR Laos) 2021-2024.**



## ຂໍ້ມູນສຳຄັນ

### ໄລຍະເວລາຂອງໂຄງການ

ເລີ່ມແຕ່ມື້ທີ່ໂຄງການໄດ້ຮັບອະນຸມັດຈົນເຖິງ ວັນທີ 31 ເດືອນກໍລະກົດ ປີ 2024

### ພື້ນທີ່ເປົ້າໝາຍ

ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ ແລະ ແຂວງວຽງຈັນ ລວມ 11 ເມືອງ

### ກຸ່ມເປົ້າໝາຍ

ທຸລະກິດທ່ອງທ່ຽວຂະໜາດນ້ອຍ ແລະ ກາງຈຳນວນ 120 ຫົວໜ່ວຍທຸລະກິດ (ຜູ້ປະກອບການທ່ອງທ່ຽວ 20 ແຫ່ງ ແລະ ໂຮງແຮມ 100 ແຫ່ງ) 500 ຫົວໜ່ວຍຜູ້ສະໜອງບໍລິການຕ່າງໆ ຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນອຸດສາຫະກຳການທ່ອງທ່ຽວ; ຊຸມຊົນ 40 ແຫ່ງທີ່ມີສ່ວນຮ່ວມຢູ່ໃນກິດຈະກຳຂອງໂຄງການ; ຕົວແທນທຸລະກິດທ່ອງທ່ຽວສາກົນ 20 ແຫ່ງ, ນັກທ່ອງທ່ຽວ 500,000 ຄົນ (ທັງພາຍໃນແລະຕ່າງປະເທດ).

### ກຸ່ມຜູ້ໄດ້ຮັບປະໂຫຍດ

ພະນັກງານ 3,600 ຄົນຂອງບໍລິສັດທ່ອງທ່ຽວ ແລະ ໂຮງແຮມ; ພະນັກງານ 2,600 ຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຢູ່ໃນຕ່ອງໂສ້ອຸດສາຫະກຳການທ່ອງທ່ຽວ, ຜູ້ຊາຍ 5,000 ຄົນ, ແມ່ຍິງ 5,000 ຄົນ, ເດັກຍິງ 5,000 ຄົນ, ເດັກຊາຍ 5,000 ຄົນ ພາຍໃນທ້ອງຖິ່ນມີສ່ວນຮ່ວມໃນວຽກງານທ່ຽວທ່ຽວພາຍໃນຊຸມຊົນ; ນັກທ່ອງທ່ຽວ 500,000 ຄົນຢູ່ໃນລາວຜູ້ທີ່ເລືອກໃຊ້ບໍລິການຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນອຸດສາກະກຳການທ່ອງທ່ຽວທີ່ໄດ້ຮັບການຢັ້ງຢືນມາດຕະຖານການທ່ອງທ່ຽວແບບຍືນຍົງ.

switchasia GRANTS PROGRAMME | Co-funded by the European Union | Travelife Sustainability in tourism | ECEAT European Centre for Eco Agro Tourism | PLAN INTERNATIONAL | LNCCI | MOIC

# ສັງລວມໂດຍຫຍໍ້

ໂຄງການ ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ສາມາດເຊື່ອມຕໍ່ກັບຕະຫຼາດໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວແບບຍືນຍົງ ໄດ້ຮັບທຶນຊ່ວຍເຫຼືອຈາກ ສະຫະພາບເອີຣົບ ແລະ ຈັດຕັ້ງປະຕິບັດໂດຍ ອົງການແພລນສາກົນ ແລະ ຄູ່ຮ່ວມງານສຳຄັນອື່ນໆ ເຊັ່ນ ກົມສົ່ງເສີມການຄ້າ (ກະຊວງອຸດສາຫະກຳ ແລະ ການຄ້າ), ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI) ສູນສະຫະພາບເອີຣົບດ້ານການທ່ອງທ່ຽວນິເວດ ແລະ ການກະສິກຳ (ECEAT).

ໂຄງການຈະໂຄງການຈະນຳໃຊ້ ຮູບແບບວຽກງານ ທີ່ມີການເຮັດວຽກແບບປະສົມປະສານຂອງພາກທຸລະກິດເປັນຕົວຂັບເຄື່ອນໃນການຊຸກຍູ້ບັນດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຕ່ອງໂສ້ອຸດສາຫະກຳການທ່ອງທ່ຽວລາວໃຫ້ຫັນມານຳໃຊ້ ແລະ ມີສ່ວນຮ່ວມໃນການສົ່ງເສີມການຜະລິດ ແລະ ການອຸປະໂພກບໍລິໂພກແບບຍືນຍົງ. ການຊຸກຍູ້ ແລະ ສົ່ງເສີມດັ່ງກ່າວ ລວມມີການຫັນເອົາບັນດາຫົວໜ່ວຍຜູ້ສະໜອງການບໍລິການຕ່າງໆ ໃຫ້ກັບອຸດສາຫະກຳທ່ອງທ່ຽວໃຫ້ເຂົ້າມາມີສ່ວນຮ່ວມ, ການສົ່ງເສີມການຊື້ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ, ການອະນຸລັກຊັບພະຍາກອນທຳມະຊາດ ແລະ ການເຮັດວຽກຮ່ວມກັບຊຸມຊົນໃນທ້ອງຖິ່ນດ້ວຍວິທີການທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ.

ການຫັນມານຳໃຊ້ແນວທາງການດຳເນີນທຸລະກິດແບບຍືນຍົງ ຈະໄດ້ຮັບການຢັ້ງຢືນຈາກມາດຕະຖານທ່ອງທ່ຽວແບບຍືນຍົງຂອງ ທຣາເວວໄລຟ໌ ເຊິ່ງໄດ້ຖືກພັດທະນາຂຶ້ນໂດຍ ສູນສະຫະພາບເອີຣົບ ດ້ານການທ່ອງທ່ຽວນິເວດ ແລະ ກະສິກຳ (ECEAT) ເຊິ່ງເປັນລະບົບການຢັ້ງຢືນດ້ານຄວາມຍືນຍົງແຖວໜ້າທີ່ຖືກຍອມຮັບໃນອຸດສາຫະກຳທ່ອງທ່ຽວໃນລະດັບສາກົນ. ວຽກງານໂຄງການ ຈະຊ່ວຍກະຕຸ້ນໃຫ້ເກີດມີຄວາມຕ້ອງການຊື້ຂອງຕະຫລາດ ກ່ຽວກັບ ການຜະລິດ ແລະ ການອຸປະໂພກບໍລິໂພກແບບຍືນຍົງໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວ ດ້ວຍການສົ່ງເສີມພາບລັກຂອງປະເທດລາວ ໃຫ້ເປັນຈຸດໝາຍປາຍທາງການທ່ອງທ່ຽວສີຂຽວ ແລະ ດ້ວຍການສ້າງຄວາມຮັບຮູ້ກ່ຽວກັບແນວທາງການດຳເນີນທຸລະກິດແບບຍືນຍົງ ຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງຂອງລາວ ໃຫ້ແກ່ກຸ່ມຜູ້ຊື້ ໂດຍສະເພາະແມ່ນກຸ່ມນັກທ່ອງທ່ຽວທົ່ວໄປ ແລະ ບັນດາທຸລະກິດການທ່ອງທ່ຽວໃນສາກົນ. ໃນທີ່ສຸດ, ຜົນປະໂຫຍດທີ່ຈະໄດ້ຮັບຈາກການຫັນມານຳໃຊ້ແນວທາງການດຳເນີນທຸລະກິດແບບຍືນຍົງຈະເຮັດໃຫ້ບັນດາຫົວໜ່ວຍທຸລະກິດເຫຼົ່ານັ້ນ ມີລາຍຮັບເພີ່ມຂຶ້ນ ແລະ ກ້າວໄປສູ່ການເຕີບໃຫຍ່ ເຊິ່ງຈະກາຍເປັນໂອກາດໃຫ້ມີການຈ້າງງານຫຼາຍຂຶ້ນ. ໂດຍການເຮັດວຽກຮ່ວມກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນຖານະທີ່ເປັນຄູ່ຮ່ວມງານພາຍໃນ, ໂຄງການຈະໃຫ້ການສະໜັບສະໜູນຢູ່ໃນບັນດາຂະແໜງການຕ່າງໆຂອງລັດ ແລະ ພາກເອກະຊົນຕໍ່ກັບການສົ່ງເສີມການຜະລິດ ແລະ ການອຸປະໂພກບໍລິໂພກແບບຍືນຍົງ ພ້ອມທັງເຮັດວຽກຮ່ວມກັບບັນດາສະມາຊິກຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນການສະໜັບສະໜູນ ວຽກງານດັ່ງກ່າວ ໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວ ທັງເປັນການສົ່ງເສີມການຜະລິດ ແລະ ການດຳເນີນທຸລະກິດຂອງບັນດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງພາຍໃນປະເທດ.



# ຈຸດປະສົງ ແລະ ຜົນໄດ້ຮັບທີ່ຄາດຫວັງ

## ຈຸດປະສົງລວມ

ເພື່ອປະກອບສ່ວນເຂົ້າໃນຍຸດທະສາດການເຕີບໂຕຕາມທິດສີຂຽວ ຂອງ ສ ປປ ລາວ, ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ IX, ຍຸດທະສາດການພັດທະນາພາກທຸລະກິດປີ 2021-2025 ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ຍຸດທະສາດການທ່ອງທ່ຽວແຫ່ງຊາດ ທັງເປັນການປະກອບສ່ວນເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ທີ 8 (ມີວຽກເຮັດງານທຳທີ່ມີກຽດ ແລະ ເສດຖະກິດມີການຂະຫຍາຍຕົວ) ແລະ ທີ 12 (ສົ່ງເສີມການອຸປະໂພກບໍລິໂພກ ແລະ ການຜະລິດຢ່າງມີຄວາມຮັບຜິດຊອບ) ຂອງການພັດທະນາແບບຍືນຍົງ ຂອງ ສ ປປ ລາວ ດ້ວຍການສົ່ງເສີມການອຸປະໂພກ-ບໍລິໂພກ ແລະ ການຜະລິດແບບຍືນຍົງໃນຕ່ອງໂສ້ອຸດສາຫະກຳການທ່ອງທ່ຽວລາວ.

### 1 ຜົນໄດ້ຮັບທີ 1:

ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວໃຫ້ມີຄວາມຍືນຍົງຫຼາຍຂຶ້ນ ໂດຍການຈັດຕັ້ງປະຕິບັດແຜນງານການຢັ້ງຢືນມາດຕະຖານຄວາມຍືນຍົງ ຂອງທຣາເວວໄລຟ໌ ຮ່ວມກັບບັນດາໂຮງແຮມ, ບໍລິສັດບໍລິການນຳທ່ຽວ, ບໍລິສັດຕົວແທນການທ່ອງທ່ຽວ ແລະ ບັນດາຫົວໜ່ວຍທຸລະກິດສະໜອງບໍລິການໃຫ້ອຸດສາຫະກຳທ່ອງທ່ຽວ. ໂຄງການຈະພັດທະນາ ແລະ ຈັດຕັ້ງປະຕິບັດບັນດາວຽກງານໃນການສົ່ງເສີມຄວາມຍືນຍົງດັ່ງກ່າວ ພາຍໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວ ພ້ອມທັງປັບປຸງບັນດາເງື່ອນໄຂຕ່າງໆສຳລັບການເປັນຊຸມຊົນເຈົ້າພາບທີ່ໃຫ້ການຕ້ອນຮັບແຂກນັກທ່ອງທ່ຽວ.

**→ *ກິດຈະກຳຫຼັກ:***

ການດັດປັບລະບົບການຢັ້ງຢືນຄວາມຍືນຍົງຂອງ ທຣາເວວໄລຟ໌ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງ ສປປ ລາວ, ຊ່ວຍເຫຼືອບໍລິສັດທ່ອງທ່ຽວ ແລະ ໂຮງແຮມເພື່ອໃຫ້ໄດ້ໃບຢັ້ງຢືນຄວາມຍືນຍົງຂອງ ທຣາເວວໄລຟ໌ຜ່ານການຝຶກອົບຮົມ ແລະ ການໃຫ້ຄຳແນະນຳ; ກຳນົດ ແລະ ສ້າງການຢັ້ງຢືນດັ່ງກ່າວໃຫ້ແກ່ບັນດາຜູ້ສະໜອງບໍລິການຕ່າງໆ ຂອງຈຸນລະວິສາຫະກິດ, ວິສາຫະກິດຂະ ໜາດນ້ອຍ ແລະ ກາງ ໃນ 5 ຂະແໜງການທີ່ສຳຄັນທີ່ຢູ່ໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວ; ຊ່ວຍເຫຼືອບັນດາຜູ້ສະໜອງບໍລິການຕ່າງໆຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຜ່ານມາດຕະຖານຕ່ອງໂສ້ອຸດສາຫະກຳການທ່ອງທ່ຽວ ໂດຍການຝຶກອົບຮົມ ແລະ ໃຫ້ຄຳແນະນຳ; ສ້າງ ແລະ ນຳໃຊ້ຜະລິດຕະພັນສີຂຽວ/ການຫາທາງອອກ ສຳລັບ ອຸດສາຫະກຳການທ່ອງທ່ຽວ; ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງແຫຼ່ງທຶນໃຫ້ແກ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ປັບປຸງການທ່ອງທ່ຽວໃນຊຸມຊົນ ຮ່ວມກັບບໍລິສັດທ່ອງທ່ຽວ ແລະ ຊຸມຊົນ ເພື່ອໃຫ້ມີສ່ວນຮ່ວມຢູ່ໃນວຽກງານການທ່ອງທ່ຽວ.

### 2 ຜົນໄດ້ຮັບທີ 2:

ບັນດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະໄດ້ຮັບການສົ່ງເສີມ ແລະ ສະໜັບສະໜູນໃຫ້ຫັນໄປສູ່ການດຳເນີນທຸລະກິດແບບຍືນຍົງ ເຊິ່ງເຮັດໃຫ້ກຸ່ມຜູ້ອຸປະໂພກ-ບໍລິໂພກ, ຜູ້ໃຊ້ບໍລິການມີຄວາມຕື່ນຕົວ ເພື່ອສ້າງຈຸດເດັ່ນ ແລະ ຂໍ້ໄດ້ປຽບທາງທຸລະກິດຂອງບັນດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການດຳເນີນທຸລະກິດແບບຍືນຍົງຕໍ່ໄປ.

**→ *ກິດຈະກຳຫຼັກ:***

ສົ່ງເສີມກິດຈະກຳການໂຄສະນາ ໂດຍເລັງໃສ່ຕົວແທນບໍລິສັດທ່ອງທ່ຽວສາກົນ (ຜ່ານຮູບແບບການຈັບຄູ່ທຸລະກິດ, ການຮ່ວມງານຕະຫຼາດນັດການທ່ອງທ່ຽວ, ການສະໜັບສະໜູນການເດີນທາງ ເພື່ອສົ່ງເສີມການຂາຍຂອງທຸລະກິດທ່ອງທ່ຽວພາຍໃນໃຫ້ກັບອຸດສາຫະກຳທ່ອງທ່ຽວຢູ່ຕ່າງປະເທດ, ການສົ່ງເສີມໂຄສະນາ ຜະລິດຕະພັນລາວ), ການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ, (ກິດຈະກຳການສົ່ງເສີມດ້ວຍການສ້າງວິດີໂອ, ການລົງໂຄສະນາໃນສື່ສັງຄົມອອນລາຍນ໌, ປິດສ໌ເຕີ, ແຜ່ນພັບ ແລະ ປ້າຍໂຄສະນາ ເປັນຕົ້ນ) ລວມທັງຂະແໜງການຕ່າງໆຂອງພາກລັດ, ອົງການສາກົນທີ່ບໍ່ສັງກັດລັດ ແລະ ບັນດາບໍລິສັດຕ່າງໆ (ເວທີແລກປ່ຽນຄວາມຄິດເຫັນ, ງານສະແດງສິນຄ້າ ແລະ ອື່ນໆ).

### 3 ຜົນໄດ້ຮັບທີ 3:

ບັນດາຫົວໜ່ວຍທຸລະກິດໃນອຸດສາຫະກຳທ່ອງທ່ຽວຕ້ອງມີແນວທາງກ່ຽວກັບການການດຳເນີນທຸລະກິດທ່ອງທ່ຽວແບບຍືນຍົງຢູ່ໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວເພື່ອຍົກຂຶ້ນມາໃນເວທີແລກປ່ຽນຄວາມຄິດເຫັນຕ່າງໆ ທັງພາຍໃນ ແລະ ພາກພື້ນ ເພື່ອປຶກສາຫາລືຫາແນວທາງວິທີແກ້ໄຂ.

**→ *ກິດຈະກຳຫຼັກ:***

ສົ່ງເສີມແນວທາງການດຳເນີນທຸລະກິດແບບຍືນຍົງໃນຕ່ອງໂສ້ອຸດສາຫະກຳທ່ອງທ່ຽວລາວ ຢູ່ໃນເວທີຕ່າງໆພາຍໃນປະເທດ (ເຄືອຄ່າຍຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ, ເວທີສົນທະນາແລກປ່ຽນທຸລະກິດລາວ); ສ້າງຄວາມເຂັ້ມແຂງໃຫ້ກົນໄກການການປະສານງານ ແລະ ເຮັດວຽກຮ່ວມກັນລະຫວ່າງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຫົວໜ່ວຍທຸລະກິດທີ່ເຂົ້າຮ່ວມໂຄງການໃນອຸດສາຫະກຳທ່ອງທ່ຽວລາວ; ສະໜັບສະໜູນສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເພື່ອສົ່ງເສີມ ແລະ ເຜີຍແຜ່ແນວທາງການດຳເນີນທຸລະກິດແບບຍືນຍົງໃຫ້ແກ່ສາທາລະນະ, ຮູບແບບການເຮັດວຽກຂອງໂຄງການ ພ້ອມທັງ ລະບົບການຢັ້ງຢືນມາດຕະຖານ ທຣາເວວໄລຟ໌ ໃນເວທີລະດັບພາກພື້ນຕ່າງໆ.

# ປະໂຫຍດໃນການເຂົ້າຮ່ວມ ໂຄງການສໍາລັບ ທຸລະກິດ

## ສໍາລັບບໍສັດນໍາທ່ຽວ, ບໍລິສັດຄຸ້ມຄອງຈຸດໝາຍປາຍທາງ ການທ່ອງທ່ຽວ, ຕາງໜ້າບໍລິສັດທ່ອງທ່ຽວ ແລະ ທີ່ພັກ

- ການຝຶກອົບຮົມ ແລະ ການໃຫ້ຄໍາແນະນໍາຂອງຜູ້ບໍລິຫານ ແລະ ພະນັກງານ ກ່ຽວກັບການດໍາເນີນທຸລະກິດແບບຍືນຍົງ ແລະ ລະບົບການຢັ້ງຢືນມາດຕະຖານ ເຊິ່ງລວມທັງ ການຢັ້ງຢືນຈາກທຣາເວວໄລຟ໌.
- ໂອກາດໃນການໄດ້ຮັບການຢັ້ງຢືນມາດຕະຖານ ທຣາເວວໄລຟ໌ ແລະ ໄດ້ຮັບການຍອມຮັບຈາກສາກົນໃນການດໍາເນີນທຸລະກິດແບບຍືນຍົງ.
- ໂອກາດໃນການປະຢັດຊັບພະຍາກອນ ແລະ ປະຢັດຕົ້ນທຶນ (ເຊັ່ນ ການນໍາໃຊ້ພະລັງງານຢ່າງມີປະສິດທິພາບ ແລະ ການອະນຸລັກແຫຼ່ງນໍ້າ).
- ໂອກາດໃນການເຮັດການຕະຫຼາດ ແລະ ສົ່ງເສີມທຸລະກິດຂອງທ່ານຜ່ານບໍລິສັດຕົວແທນການທ່ອງທ່ຽວສາກົນ (ຜ່ານເວທີແລກປ່ຽນທາງອອນລາຍ, ງານເທດສະການທ່ອງທ່ຽວ, ງານວາງສະແດງສິນຄ້າ ແລະ ອື່ນໆ) ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ (ຜ່ານທາງສື່ສັງຄົມອອນລາຍ, ງານເທດສະການທ່ອງທ່ຽວພາຍໃນປະເທດ ແລະ ອື່ນໆ) ບໍລິສັດ ແລະ ອົງການຈັດຕັ້ງທ້ອງຖິ່ນ (ເຊັ່ນ ຜ່ານເວທີແລກປ່ຽນຄວາມຄິດເຫັນ ແລະ ງານວາງສະແດງສິນຄ້າພາຍໃນປະເທດ).
- ໂອກາດໃນການປັບຕົວເຂົ້າກັບແນວໂນ້ມທີ່ຈະເກີດຂຶ້ນໃໝ່ໃນອຸດສາຫະກໍາການທ່ອງທ່ຽວ ແລະ ການເຂົ້າຫາຕະຫຼາດໃໝ່ໆ.
- ປັບປຸງຄວາມຍືນຍົງໃນຕ່ອງໂສ້ທຸລະກິດຂອງທ່ານໂດຍການເຂົ້າເຖິງຜູ້ສະໜອງດ້ານບໍລິການ ແລະ ຜະລິດຕະພັນຕ່າງໆທີ່ຍືນຍົງ.
- ມີສ່ວນຮ່ວມໃນການພັດທະນາຜະລິດຕະພັນ ຫຼື ທາງເລືອກທີ່ຍືນຍົງໃຫ້ແກ່ຕ່ອງໂສ້ອຸດສາຫະກໍາການທ່ອງທ່ຽວ (ເຊັ່ນ ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ເຄື່ອງມືດິຈິຕອນ ແລະ ອື່ນໆ).
- ເຂົ້າຮ່ວມການສໍາມະນາກ່ຽວກັບການເຂົ້າເຖິງແຫຼ່ງທຶນ

## ສໍາລັບຜູ້ສະໜອງດ້ານການບໍລິການ ແລະ ຜະລິດຕະພັນໃຫ້ແກ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

- ການຝຶກອົບຮົມ ແລະ ການໃຫ້ຄໍາແນະນໍາຂອງຜູ້ບໍລິຫານ ແລະ ພະນັກງານ ກ່ຽວກັບ ການດໍາເນີນທຸລະກິດແບບຍືນຍົງ ແລະ ລະບົບການຢັ້ງຢືນມາດຕະຖານ ເຊິ່ງລວມທັງການຢັ້ງຢືນຈາກ ທຣາເວວໄລຟ໌.
- ໂອກາດໃນການຮັບການຢັ້ງຢືນມາດຕະຖານກ່ຽວກັບການດໍາເນີນທຸລະກິດແບບຍືນຍົງໃຫ້ແກ່ທຸລະກິດຂອງທ່ານ.
- ໂອກາດໃນການປະຢັດຊັບພະຍາກອນ ແລະ ປະຢັດຕົ້ນທຶນ (ເຊັ່ນ ການນໍາໃຊ້ພະລັງງານຢ່າງມີປະສິດທິພາບ ແລະ ການອະນຸລັກ ແຫຼ່ງນໍ້າ).
- ການເຮັດການຕະຫຼາດ ແລະ ການສົ່ງເສີມທຸລະກິດຂອງທ່ານ (ຜ່ານສື່ສັງຄົມອອນລາຍ, ວາລະສານ, ການສະໜັບສະໜູນການເດີນທາງເພື່ອສົ່ງເສີມການຂາຍຂອງທຸລະກິດທ່ອງທ່ຽວພາຍໃນໃຫ້ກັບອຸດສາຫະກໍາທ່ອງທ່ຽວຢູ່ຕ່າງປະເທດ, ການສົ່ງເສີມຜະລິດຕະພັນ ແລະ ການບໍລິການໃນງານວາງສະແດງສິນຄ້າ ແລະ ງານເທດສະການທ່ອງທ່ຽວ ແລະ ອື່ນໆ).
- ໂອກາດໃນການປັບຕົວເຂົ້າກັບແນວໂນ້ມທີ່ຈະເກີດຂຶ້ນໃໝ່ໃນອຸດສາຫະກໍາການທ່ອງທ່ຽວ ແລະ ການເຂົ້າຫາຕະຫຼາດ ໃໝ່ໆ.
- ການຈັບຄູ່ທຸລະກິດ ກັບທຸລະກິດການທ່ອງທ່ຽວ (ເຊັ່ນຜູ້ປະກອບການທ່ອງທ່ຽວ, ບໍລິສັດຕົວແທນທ່ອງທ່ຽວ ແລະ ຜູ້ໃຫ້ບໍລິການທີ່ພັກ).
- ມີສ່ວນຮ່ວມໃນການພັດທະນາຜະລິດຕະພັນ ຫຼື ທາງເລືອກທີ່ຍືນຍົງໃຫ້ແກ່ຕ່ອງໂສ້ອຸດສາຫະກໍາການທ່ອງທ່ຽວ (ເຊັ່ນ ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ເຄື່ອງມືດິຈິຕອນ ແລະ ອື່ນໆ).
- ເຂົ້າຮ່ວມການສໍາມະນາກ່ຽວກັບການເຂົ້າເຖິງແຫຼ່ງທຶນ.

# ການຢັ້ງຢືນຄວາມຍືນຍົງ ຂອງທຣາເວວໄລຟ໌

## ພາບລວມຂອງມາດຖານ ແລະ ຂະບວນການໃນການຢັ້ງຢືນ ຂອງທຣາເວວໄລຟ໌

ການຢັ້ງຢືນການທ່ອງທ່ຽວແບບຍືນຍົງຂອງ ທຣາເວວໄລຟ໌ ໄດ້ຮັບການສະໜັບສະໜູນ ຈາກຂະແໜງການທ່ອງທ່ຽວທົ່ວໂລກ ເປັນລະບົບຄວາມຍືນຍົງທີ່ນຳໜ້າໃນອຸດສາຫະກຳການທ່ອງທ່ຽວ. ດັ່ງນັ້ນ, ລະບົບໃນການຢັ້ງຢືນຂອງທຣາເວວໄລຟ໌ມີຂັ້ນຕອນການນຳພາທາງດ້ານການຝຶກອົບຮົມ, ການຄຸ້ມຄອງ ແລະ ການຢັ້ງຢືນສຳລັບບໍລິສັດທ່ອງທ່ຽວທີ່ມີຄວາມມຸ່ງໝັ້ນທີ່ຢາກຫັນມາປັບປຸງການດຳເນີນທຸລະກິດໃຫ້ມີຄວາມຍືນຍົງໃນອຸດສາຫະກຳທ່ອງທ່ຽວ. ມາດຖານການປະຕິບັດແບບຍືນຍົງໄດ້ຖືກສ້າງຕັ້ງຂຶ້ນມາກ່ອນໃນຂອບຂອງໂຄງການ EU LIFE (2004 - 2007) ໂດຍອີງໃສ່ແນວຄວາມຄິດການຄຸ້ມຄອງຄວາມຍືນຍົງທີ່ພັດທະນາໂດຍແຜນງານສິ່ງແວດລ້ອມຂອງອົງການສະຫະປະຊາຊາດ ແລະ ໂຄງການການພັດທະນາທ່ອງທ່ຽວແບບຍືນຍົງສຳລັບບໍລິສັດທ່ອງທ່ຽວ ແລະ ບໍລິສັດຕົວແທນທ່ອງທ່ຽວ. ມາດຕະຖານ ການຢັ້ງຢືນການທ່ອງທ່ຽວແບບຍືນຍົງຂອງ ທຣາເວວໄລຟ໌ແມ່ນສອດຄ່ອງກັບມາດຕະຖານ ISO 14001, ມາດຕະຖານ EMAS III, ຊຸດມາດຕະຖານ ISO 26000, ຂອງຄະນະອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ ແລະ ຖືກຮັບຮອງໂດຍສະພາການທ່ອງທ່ຽວແບບຍືນຍົງສາກົນ. ການຈັ້ງຕັ້ງປະຕິບັດ ເພື່ອບັນລຸມາດຖານ ຕ້ອງຜ່ານການຝຶກອົບຮົມແບບປະສົມປະສານ, ລະບົບການຄຸ້ມຄອງຄວາມຍືນຍົງຂອງຂະແໜງການສະເພາະ, ການທົບທວນນະໂຍບາຍ ແລະ ແນວທາງແກ້ໄຂບັນຫາ, ເຄື່ອງມືການວາງແຜນ ແລະ ການລາຍງານຜ່ານເວັບໄຊສ, ການບັນລຸມາດຕະຖານພື້ນຖານ ແລະ ການກວດສອບ ແລະ ການຢັ້ງຢືນຂອງຜູ້ປະກອບການທຸລະກິດ ທ່ອງທ່ຽວ, ໂຮງແຮມ ແລະ ຜູ້ສະໜອງການບໍລິການຂອງພວກເຂົາ. ເພື່ອໃຫ້ໄດ້ຮັບການຢັ້ງຢືນ, ຫົວໜ່ວຍ ທຸລະກິດຕ້ອງ ໄດ້ລົງທະບຽນໃນລະບົບອອນລາຍນ໌, ຈ່າຍຄ່າທຳນຽມສະມາຊິກທີ່ມູນຄ່າບໍ່ຫຼາຍ, ຕື່ມຂັ້ນຕອນການລາຍງານໃຫ້ສຳເລັດ, ໄດ້ຮັບການປະເມີນ ແລະ ກວດສອບຈາກອົງກອນພາຍນອກ.



# ເງື່ອນໄຂ

ສໍາລັບຜູ້ປະກອບການທ່ອງທ່ຽວ, ຕົວແທນທ່ອງທ່ຽວ ແລະ ທີ່ພັກ (ໂຮງແຮມ ແລະ ເຮືອນພັກ) ເທົ່ານັ້ນ ຈຶ່ງເຂົ້າກັບເງື່ອນໄຂໃນການໄດ້ຮັບການຢັ້ງຢືນຄວາມຍືນຍົງຈາກທຣາເວວໄລຟ໌.

## ມາດຕະຖານ

ເງື່ອນໄຂການຢັ້ງຢືນການທ່ອງທ່ຽວແບບຍືນຍົງຂອງ ທຣາເວວໄລຟ໌ ສໍາລັບທຸລະກິດນໍາທ່ຽວ ແລະ ໂຮງແຮມແມ່ນມີຄວາມສົມບູນ ແລະ ເໝາະສົມກັບທ້ອງຖິ່ນ, ເຊິ່ງປະກອບມີເງື່ອນໄຂທາງດ້ານສິ່ງແວດລ້ອມ (ການປ່ຽນແປງດິນຟ້າອາກາດ, ການຊົດເຊີຍທາດກາກບອນ, ການຈັດການສິ່ງເສດເຫຼືອ, ການຫຼຸດຜ່ອນການນໍາໃຊ້ວັດຖຸທີ່ເຮັດມາຈາກປລາດສະຕິກ, ການນໍາໃຊ້ພະລັງງານຢ່າງມີປະສິດທິພາບ, ການອະນຸລັກນໍ້າ ແລະ ອື່ນໆ), ອົງປະກອບທາງສັງຄົມ (ສິດທິມະນຸດ, ຄວາມຮັບຮູ້ກ່ຽວກັບບົດບາດຍິງ - ຊາຍ, ເດັກນ້ອຍ, ການລ່ວງລະເມີດທາງເພດ, ການພົວພັນກັບຊຸມຊົນ, ສິດທິແຮງງານ, ສຸຂະພາບ ແລະ ຄວາມປອດໄພໃນສະຖານທີ່ເຮັດວຽກ ແລະ ອື່ນໆ) ແລະ ອົງປະກອບທາງດ້ານເສດຖະກິດ (ວຽກທີ່ເໝາະສົມ, ສະພາບການຈ້າງງານ, ການຊື້ສິນຄ້າຈາກທ້ອງຖິ່ນ ແລະ ອື່ນໆ). ເງື່ອນໄຂມາດຕະຖານຄວາມຍືນຍົງມີຈໍານວນທັງໝົດ 256 ມາດຕະຖານ ໃນນັ້ນມີ 199 ມາດຕະຖານທີ່ຈໍາເປັນຕ້ອງປະຕິບັດ, ໝາຍຄວາມວ່າຫົວໜ່ວຍທຸລະກິດຕ້ອງໄດ້ຜ່ານເງື່ອນໄຂມາດຕະຖານເພື່ອໃຫ້ໄດ້ຮັບການຢັ້ງຢືນ ແລະ ອີກ 57 ມາດຕະຖານແມ່ນແລ້ວແຕ່ຄວາມສະໝັກ ໃຈຂອງຫົວໜ່ວຍທຸລະກິດ, ເຖິງແມ່ນວ່າມາດຕະຖານດັ່ງກ່າວບໍ່ຈໍາເປັນຕ້ອງໄດ້ປະຕິບັດຕາມເງື່ອນໄຂມາດຕະຖານ ເພື່ອໃຫ້ໄດ້ຮັບການຢັ້ງຢືນ, ບໍລິສັດທີ່ສະໝັກຍັງຕ້ອງໄດ້ລາຍງານລາຍລະອຽດກ່ຽວກັບ ການປະຕິບັດຕາມເງື່ອນໄຂມາດຕະຖານທີ່ໄດ້ວາງອອກ.

Travelife CERTIFIED Excellence in sustainability

ມາດຕະຖານແມ່ນສະຫຼຸບໄດ້ 10 ຫົວຂໍ້ຫຼັກ ທີ່ໄດ້ລະບຸໄວ້ໃນຕາຕະລາງລຸ່ມນີ້:

| ຫົວຂໍ້ | ມາດຕະຖານທັງໝົດ | ມາດຕະຖານພາກສະໝັກໃຈ | ມາດຕະຖານພາກບັງຄັບ |
|---|---|---|---|
| **1.** ການບໍລິຫານຄວາມຍືນຍົງ ແລະ ການປະຕິບັດຕາມກົດໝາຍ | 33 | 3 | 30 |
| **2.** ນະໂຍບາຍດ້ານສັງຄົມ ແລະ ສິດທິມະນຸດ | 28 | 6 | 22 |
| **3.** ການພົວພັນດ້ານສິ່ງແວດລ້ອມ & ຊຸມຊົນ | 65 | 14 | 51 |
| **4.** ບັນດາບໍລິສັດຄູ່ຮ່ວມມື | 16 | 6 | 10 |
| **5.** ການຮັບສົ່ງ | 20 | 4 | 16 |
| **6.** ທີ່ພັກ | 16 | 3 | 13 |
| **7.** ການທ່ອງທ່ຽວ | 27 | 5 | 22 |
| **8.** ຫົວໜ້າກຸ່ມທົວ, ຕົວແທນຈາກທ້ອງຖິ່ນ ແລະຜູ້ນໍາທ່ຽວ | 10 | 3 | 7 |
| **9.** ແຫຼ່ງທ່ອງທ່ຽວ | 11 | 5 | 6 |
| **10.** ການສື່ສານ ແລະ ປົກປ້ອງລູກຄ້າ | 30 | 8 | 22 |



# ຂັ້ນຕອນການຢັ້ງຢືນ

**ເພື່ອໃຫ້ໄດ້ຮັບການຢັ້ງຢືນຈາກ ທຣາເວວໄລຟ໌ ແຕ່ລະຫົວໜ່ວຍທຸລະກິດຕ້ອງໄດ້ຜ່ານຂັ້ນຕອນດັ່ງຕໍ່ໄປນີ້:**

### 1 ຂັ້ນຕອນທີ 1: ສ້າງການມີສ່ວນຮ່ວມ

ຫົວໜ່ວຍທຸລະກິດມີສ່ວນຮ່ວມໂດຍການປະຕິບັດຕາມຂັ້ນຕອນຂອງ ທຣາເວວໄລຟ໌ ແລະ ລົງທະບຽນໃນລະບົບອອນລາຍນ໌.

### 2 ຂັ້ນຕອນທີ 2: ການຝຶກອົບຮົມ

ຫົວໜ່ວຍທຸລະກິດແຕ່ງຕັ້ງຜູ້ປະສານງານດ້ານຄວາມຍືນຍົງ ຜູ້ທີ່ໄດ້ຮັບການ ຝຶກອົບຮົມ ເບື້ອງຕົ້ນ 3 ມື້ ໂດຍຄູຝຶກທີ່ໄດ້ຮັບການຢັ້ງຢືນຈາກ ສູນສະຫະພາບເອີຣົບ ດ້ານການທ່ອງທ່ຽວນິເວດ ແລະ ກະສິກຳ ECEAT ແລະ ສະມາຄົມບໍລິສັດທ່ອງທ່ຽວອັງກິດ ABTA.

### 3 ຂັ້ນຕອນທີ 3: ການລາຍງານ ແລະ ການຝຶກອົບຮົມ

ຜູ້ປະສານງານດ້ານຄວາມຍືນຍົງທີ່ຖືກແຕ່ງຕັ້ງ ເລີ່ມຕົ້ນລາຍງານ ການປະຕິບັດຕາມແຕ່ລະເງື່ອນໄຂມາດຕະຖານຄວາມຍືນຍົງ ໃນລະບົບການລາຍງານແບບອອນລາຍນ໌. ຂັ້ນຕອນການລາຍງານ ແມ່ນຮຽກຮ້ອງໃຫ້ມີການສະແດງຫຼັກຖານການປະຕິບັດ (ຕົວຢ່າງເຊັ່ນ: ການອັບໂຫຼດນະໂຍບາຍທີ່ກ່ຽວຂ້ອງຂອງບໍລິສັດ). ລະບົບການລາຍງານແບບອອນລາຍນ໌ຈະລວມມີຄຳແນະນຳ ແລະ ເອກະສານການຝຶກອົບຮົມ (ເຊິ່ງຈະຖືກແປເປັນພາສາລາວ). ນອກຈາກນັ້ນ, ຕະຫຼອດຂະບວນການລາຍງານ ຫົວໜ່ວຍທຸລະກິດຈະໄດ້ຮັບການສະໜັບສະໜູນ ແລະ ການຝຶກຢ່າງຕໍ່ເນື່ອງ ຈາກທີມງານໂຄງການປະຈຳ ຢູ່ ສປປ ລາວ, ພ້ອມທັງການສະໜັບສະໜູນ ແລະ ການຝຶກທາງອອນລາຍນ໌ ຈາກຊ່ຽວຊານຂອງ ສູນສະຫະພາບເອີຣົບ ດ້ານການທ່ອງທ່ຽວນິເວດ ແລະ ກະສິກຳ ທີ່ຢູ່ສະຫະພາບເອີຣົບ ECEAT.

### 4 ຂັ້ນຕອນທີ 4: ການປະເມີນ/ການກວດສອບ

ເມື່ອຫົວໜ່ວຍທຸລະກິດໄດ້ສຳເລັດຂັ້ນຕອນການລາຍງານ ພວກເຂົາເຈົ້າຈະສະເໜີເພື່ອຂໍການປະເມີນ/ການກວດສອບ ຈາກສູນສະຫະພາບເອີຣົບ ດ້ານການທ່ອງທ່ຽວນິເວດ ແລະ ກະສິກຳ. ເພື່ອໃຫ້ໄດ້ຮັບສະຖານະຂັ້ນພື້ນຖານ ຂອງ ທຣາເວວໄລຟ໌ ສຳລັບບໍລິສັດທ່ອງທ່ຽວ ແມ່ນຕ້ອງການພຽງແຕ່ການລາຍງານ ແລະ ການປະເມີນອອນລາຍນ໌ເທົ່ານັ້ນ. ເພື່ອໃຫ້ໄດ້ຮັບສະຖານະຂັ້ນສົມບູນ ຂອງ ທຣາເວວໄລຟ໌ ສຳລັບບໍລິສັດທ່ອງທ່ຽວ, ຕົວແທນການທ່ອງທ່ຽວ ແລະ ສະຖານທີ່ພັກແຮມ ແມ່ນຈຳເປັນຕ້ອງມີການກວດສອບໂດຍຜູ້ກວດສອບອິດສະຫຼະ ຈາກພາກສ່ວນພາຍນອກ ເຊິ່ງສູນສະຫະພາບເອີຣົບ ດ້ານການທ່ອງທ່ຽວນິເວດ ແລະ ກະສິກຳ ຫຼື ສະມາຄົມ ບໍລິສັດທ່ອງທ່ຽວອັງກິດ ຈະເປັນຄົນຈັດຫາຜູ້ທີ່ມີຄຸນສົມບັດ ແລະ ໄດ້ຜ່ານການຝຶກອົບຮົມແລ້ວ ເພື່ອລົງຢ້ຽມຢາມຫົວໜ່ວຍທຸລະກິດ ເຊິ່ງຈະໃຊ້ເວລາ 1-2 ມື້ ເພື່ອກວດສອບການປະຕິບັດຕາມການລາຍງານຂອງທຣາເວວໄລຟ໌ ແລະ ສົ່ງຜົນໄດ້ຮັບ ພ້ອມທັງຄຳແນະນຳ ໃຫ້ແກ່ ສູນສະຫະພາບເອີຣົບ ດ້ານການທ່ອງທ່ຽວນິເວດ ແລະ ກະສິກຳ ຫຼື ສະມາຄົມບໍລິສັດທ່ອງທ່ຽວອັງກິດ. ຫຼັງຈາກນັ້ນ, ສູນສະຫະພາບເອີຣົບ ດ້ານການທ່ອງທ່ຽວນິເວດ ແລະ ກະສິກຳ ຫຼື ສະມາຄົມບໍລິສັດທ່ອງທ່ຽວອັງກິດ ຈະທົບທວນບົດລາຍງານການກວດສອບ ແລະ ພິຈາລະນາວ່າຫົວໜ່ວຍທຸລະກິດນັ້ນຄວນຈະໄດ້ຮັບສະຖານະຂັ້ນສົມບູນ ຫຼື ບໍ່.

### 5 ຂັ້ນຕອນທີ 5: ການຢັ້ງຢືນ

ຖ້າຫົວໜ່ວຍທຸລະກິດໄດ້ຮັບສະຖານະຂັ້ນສົມບູນ ສູນສະຫະພາບເອີຣົບ ດ້ານການທ່ອງທ່ຽວນິເວດ ແລະ ກະສິກຳ ຫຼື ສະມາຄົມບໍລິສັດທ່ອງທ່ຽວອັງກິດຈະອອກໃບຢັ້ງຢືນ ທຣາເວວໄລຟ໌ ໃຫ້. ການໄດ້ຮັບການຢັ້ງຢືນຂອງຫົວໜ່ວຍທຸລະກິດດັ່ງກ່າວ ຈະຖືກເຜີຍແຜ່ໃນບັນດາສະມາຊິກຂອງທຣາເວວໄລຟ໌ ແລະ ໃນສື່ສັງຄົມຕ່າງໆ (ຕົວຢ່າງເຊັ່ນ ເວັບໄຊ໌ ທຣາເວວໄລຟ໌, ສື່ສັງຄົມອອນລາຍນ໌ເປັນຕົ້ນ) ແລະ ຜ່ານພິທີການມອບໃບຢັ້ງຢືນ (ຕົວຢ່າງເຊັ່ນ ງານວາງສະແດງ ການທ່ອງທ່ຽວ ແລະ ການຄ້າສາກົນ). ສະຖານະຂອງການຢັ້ງຢືນແມ່ນມີອາຍຸ 2 ປີ, ຖ້າຫົວໜ່ວຍທຸລະກິດໃດຫາກຕ້ອງການທີ່ຈະຮັກສາສະຖານະການຢັ້ງຢືນດັ່ງກ່າວ ພວກເຂົາເຈົ້າຈະຕ້ອງໄດ້ຜ່ານການກວດສອບມາດຕະຖານຄວາມຍືນຍົງອີກຄັ້ງ.

# ຂັ້ນຕອນການຢັ້ງຢືນ ຂອງທຣາເວວໄລລຟ໌ ໃນ ລາວ




1. SUSTOUR ເຂົ້າຫາບັນດາຫົວໜ່ວຍທຸລະກິດ ເພື່ອໃຫ້ລົງທະບຽນໃນລະບົບຂອງທຣາເວວໄລຟ໌. ຫົວໜ່ວຍທຸລະກິດເລີ່ມຈ່າຍຄ່າທຳນຽມສະມາຊິກໃນລາຄາຕ່ຳ.

2. ຫົວໜ່ວຍທຸລະກິດລາຍງານການປະຕິບັດຕາມມາດຕະຖານຂອງທຣາເວວໄລຟ໌.

3. SUSTOUR ໃຫ້ຄວາມຊ່ວຍເຫຼືອ ແລະ ໃຫ້ຄຳແນະນຳແກ່ຫົວໜ່ວຍທຸລະກິດໃນທຸກຂັ້ນຕອນ.

4. ຫົວໜ່ວຍທຸລະກິດຖືກປະເມີນ/ກວດສອບ.

5. ຖ້າຫາກບັນດາຫົວໜ່ວຍທຸລະກິດຜ່ານບັນດາມາດຖານເງື່ອນໄຂ. ພວກເຂົາຈະໄດ້ຮັບການຢັ້ງຢືນທຣາເວວໄລຟ໌.

# ຄ່າທຳນຽມສະມາຊິກ

Travellife ມີຄ່າທຳນຽມສະມາຊິກເລັກນ້ອຍ ເຊິ່ງກວມເອົາຄ່າໃຊ້ຈ່າຍຂອງລະບົບອອນລາຍ, ຄ່າທຳນຽມ ແລະ ຄ່າເດີນທາງຂອງຜູ້ກວດສອບເທົ່ານັ້ນ. ໂດຍປົກກະຕິທຸລະກິດຈະໄດ້ຊຳລະຄ່າທຳນຽມພາຍໃນ 2 ປີ. ຄ່າທຳນຽມສະມາຊິກສຳລັບບໍລິສັດທ່ອງທ່ຽວ ແລະ ໂຮງແຮມແມ່ນຂຶ້ນກັບຂະໜາດຂອງທຸລະກິດ ແລະ ອາດຈະມີການປ່ຽນແປງ. ສຳລັບຄ່າສະມາຊິດແມ່ນໄດ້ລະບຸໃນເວັບໄຊທ໌ Travelife - www.travelife.info ແລະ www.travelifestaybetter.com. ໃນຊ່ວງໄລຍະເວລາຂອງໂຄງການ SUSTOUR, ທຸລະກິດການທ່ອງທ່ຽວໃນລາວຈະໄດ້ຮັບສິດທິໃນການຍົກເວັ້ນຄ່າສະມາຊິກ Travelife ລວມທັງຄ່າໃຊ້ຈ່າຍໃນການກວດສອບ.

### ທຣາເວວໄລຟ໌ສຳລັບທີ່ພັກ:

| ຂະໜາດຂອງທີ່ພັກ | ຄ່າທຳນຽມສະມາຊິກ ສຳລັບ 2 ປີ (ໄດ້ຮັບສ່ວນຫຼຸດເນື່ອງຈາກການແຜ່ລະບາດພະຍາດ ໂຄວິດ-19 ລວມຄ່າໃຊ້ຈ່າຍສຳລັບການກວດສອບ)* |
|---|---|
| **ຈຸນລະວິສາຫະກິດ (ຮອງຮັບແຂກ 1-30 ຄົນ)** | $675 |
| **ວິສາຫະກິດຂະໜາດນ້ອຍ (ຮອງຮັບແຂກ 31-160 ຄົນ)** | $915 |
| **ວິສາຫະກິດຂະໜາດກາງ (ຮອງຮັບແຂກ 161-1000 ຄົນ)** | $1,600 |
| **ວິສາຫະກິດຂະໜາດໃຫຍ່ (ຮອງຮັບແຂກຫຼາຍກວ່າ 1001 ຄົນ)** | $2,270 |

* ໝາຍເຫດ: ຄ່າທຳນຽມສະມາຊິກ ສຳລັບ ທີ່ພັກແມ່ນໄດ້ລວມຄ່າໃຊ້ຈ່າຍສຳລັບການກວດສອບເພື່ອຢັ້ງຢືນມາດຕະຖານຄວາມຍືນຍົງແລ້ວ.

### ທຣາເວວໄລຟ໌ສຳລັບບໍລິສັດນຳທ່ຽວ:

| ຂະໜາດຂອງບໍລິສັດນຳທ່ຽວ | ຄ່າທຳນຽມສະມາຊິກ ສຳລັບ 2 ປີ (ໄດ້ຮັບສ່ວນຫຼຸດເນື່ອງຈາກການແຜ່ລະບາດພະຍາດ ໂຄວິດ-19 ລວມຄ່າໃຊ້ຈ່າຍສຳລັບການກວດສອບ)* |
|---|---|
| **ຈຸນລະວິສາຫະກິດ (ບຸຄະລາກອນປະຈຳ <25 ຄົນ)** | $240 |
| **ວິສາຫະກິດຂະໜາດກາງ (ບຸຄະລາກອນປະຈຳ ≥25 ຄົນ)** | $360 |
| **ວິສາຫະກິດຂະໜາດໃຫຍ່ (ບຸຄະລາກອນປະຈຳ >100)** | $480 |

*ໝາຍເຫດ: ຄ່າທຳນຽມສະມາຊິກ ສຳລັບ ບໍລິສັດນຳທ່ຽວ ແມ່ນບໍ່ໄດ້ລວມຄ່າໃຊ້ຈ່າຍສຳລັບການກວດສອບເພື່ອຢັ້ງຢືນມາດຕະຖານຄວາມຍືນຍົງ. ຄ່າໃຊ້ຈ່າຍສຳລັບການກວດສອບແມ່ນແຕກຕ່າງກັນ ອີງຕາມຂະໜາດຂອງບໍລິສັດ ເຊິ່ງຢູ່ລະຫວ່າງ $500 ສຳລັບບໍລິສັດຂະໜາດນ້ອຍ ຈົນເຖິງ $2,400 ສຳລັບບໍລິສັດຂະໜາດໃຫຍ່.



# ແຜນງານການຢັ້ງຢືນ ຄວາມຍືນຍົງສຳລັບ ຜູ້ສະໜອງ

## ພາບລວມຂອງມາດຖານເງື່ອນໄຂ ແລະ ຂັ້ນຕອນການຢັ້ງຢືນຄວາມຍືນຍົງສຳລັບ ຫົວໜ່ວຍທຸລະກິດທີ່ສະໜອງການບໍລິການ ແລະ ຜະລິດຕະພັນ

ການຢັ້ງຢືນ ລາວຍືນຍາວ ແມ່ນແຜນງານດ້ານຄວາມຍືນຍົງຂອງຫົວໜ່ວຍທຸລະກິດທີ່ສະໜອງການບໍລິການ ແລະ ຜະລິດຕະພັນໃນອຸດສາຫະກຳການທ່ອງທ່ຽວ ເຊິ່ງໄດ້ສະແດງໃຫ້ເຫັນເຖິງການປະຕິບັດແນວທາງຄວາມຍືນຍົງທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ. ແຜນງານດັ່ງກ່າວໄດ້ຖືກສ້າງເພື່ອເປັນສ່ວນໜຶ່ງຂອງໂຄງການ SUSTOUR ລາວ (ໂດຍໄດ້ຮັບການສະໜັບສະໜູນທຶນຈາກ ສະຫະພາບເອີຣົບ) ແລະ ບໍລິຫານຄຸ້ມຄອງໂດຍ ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ(ສຄອຊ). ເປົ້າໝາຍຂອງແຜນງານນີ້ແມ່ນເພື່ອປັບປຸງຄວາມຍືນຍົງໂດຍລວມຂອງຕ່ອງໂສ້ການສະໜອງຜະລິດຕະພັນການທ່ອງທ່ຽວໂດຍການວາງມາດຕະຖານ, ເງື່ອນໄຂ ແລະ ແນວທາງໃນການປະເມີນໃຫ້ແກ່ຫົວໜ່ວຍທຸລະກິດສະໜອງການບໍລິການ ແລະ ຜະລິດຕະພັນເພື່ອວັດແທກ ແລະ ປັບປຸງຄວາມຍືນຍົງ.

ການຢັ້ງຢືນແມ່ນອີງຕາມຊຸດມາດຕະຖານເງື່ອນໄຂທີ່ໄດ້ສ້າງຂຶ້ນໃຫ້ບັນດາສີ່ຂະແໜງການທີ່ສຳຄັນຂອງອຸດສາຫະກຳການທ່ອງທ່ຽວ. ໃນນີ້ ການຈັດການສິ່ງເສດເຫຼືອເປັນວຽກງານບູລິມະສິດທີ່ປິ່ນອ້ອມທຸກຂະແໜງການ. ບັນດາມາດຕະຖານເງື່ອນໄຂເຫຼົ່ານີ້ໄດ້ຖືກສ້າງຂຶ້ນມາໂດຍຜ່ານການປຶກສາຫາລືກັບພາກລັດ ແລະ ພາກເອກະຊົນ ແລະ ອີງໃສ່ມາດຕະຖານເງື່ອນໄຂຂອງທຣາເວວໄລຟ໌. ສຳລັບທຸລະກິດທີ່ສະໜອງການບໍລິການ ແລະ ຜະລິດຕະພັນຕ້ອງໄດ້ສະແດງໃຫ້ເຫັນການປະຕິບັດຕາມມາດຕະຖານເງື່ອນໄຂ ເພື່ອໃຫ້ກາຍເປັນທຸລະກິດທີ່ໄດ້ຮັບການຢັ້ງຢືນຈາກແຜນງານ ລາວຍືນຍາວ. ທຸລະກິດທີ່ສະໜອງການບໍລິການ ແລະ ຜະລິດຕະພັນຈະຕ້ອງລາຍງານການປະຕິບັດຕາມມາດຕະຖານເງື່ອນໄຂຜ່ານທາງອອນລາຍຂອງ ທຣາເວວໄລຟ໌. ການປະຕິບັດຕາມມາດຕະຖານເງື່ອນໄຂຈະໄດ້ຮັບການກວດກາ ແລະ ຖືກຢັ້ງຢືນຄວາມຖືກຕ້ອງໂດຍ ສຄອຊ ດ້ວຍການສະໜັບສະໜູນທາງດ້ານວິຊາການຈາກໂຄງການ SUSTOUR ລາວ. ບັນດາຫົວໜ່ວຍທຸລະກິດທີ່ຜ່ານການຢັ້ງຢືນຄວາມຖືກຕ້ອງໃນການປະຕິບັດຕາມເງື່ອນໄຂ ຈະໄດ້ຮັບການຢັ້ງຢືນ ແລະ ຖືກຮັບຮູ້ໃນຖານະຜູ້ສະໜອງດ້ານຄວາມຍືນຍົງແຖວໜ້າຢູ່ໃນຕ່ອງໂສ້ການສະໜອງຜະລິດຕະພັນໃນອຸດສາຫະກຳການທ່ອງທ່ຽວ.



# ຂັ້ນຕອນຂອງການອອກໃບຢັ້ງຢືນ

ຂັ້ນຕອນຂອງການອອກໃບຢັ້ງຢືນແຜນງານ ລາວຍືນຍາວ ສາມາດສະຫຼຸບຕາມຂັ້ນຕອນລຸ່ມນີ້:

**1.** ຫົວໜ່ວຍທຸລະກິດຍື່ນໃບສະໝັກ*

**2.** ຫົວໜ່ວຍທຸລະກິດຈະໄດ້ບັນດາມາດຕະຖານເງື່ອນໄຂ, ວິທີການເຂົ້າລະບົບ ແລະ ເຄື່ອງມືອື່ນໆ*

**3.** ຫົວໜ່ວຍທຸລະກິດຈະໄດ້ຮັບການຝຶກອົບຮົມແລະການໃຫ້ຄໍາປຶກສາ*

**4.** ຫົວໜ່ວຍທຸລະກິດສໍາເລັດຂັ້ນຕອນການລາຍງານ

**5.** ຫົວໜ່ວຍທຸລະກິດຍື່ນສະໝັກເພື່ອຂໍຮັບການປະເມີນ*

**6.** ສຄອຊ ດໍາເນີນການປະເມີນ*

ຫົວໜ່ວຍທຸລະກິດຜ່ານການປະເມີນ ແລະ ໄດ້ຮັບການຢັ້ງຢືນ

ຫົວໜ່ວຍທຸລະກິດບໍ່ຜ່ານການປະເມີນ ແລະ ໄດ້ຮັບຄໍາແນະນໍາເພື່ອນໍາໄປປັບປຸງ

** ໂຄງການ SUSTOUR ລາວຈະໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແກ່ ສຄອຊ ໃນລະຫວ່າງການດໍາເນີນຂັ້ນຕອນເຫຼົ່ານີ້.*

## 1> ຂັ້ນຕອນທີ 1: ສ້າງການມີສ່ວນຮ່ວມ.

ພາຍຫຼັງທີ່ມີງານເຜີຍແຜ່ກ່ຽວກັບການຢັ້ງຢືນໃຫ້ແກ່ຫົວໜ່ວຍທຸລະກິດເຊິ່ງຈັດຂຶ້ນໂດຍ ສຄອຊ ແລະ ໂຄງການ SUSTOUR ແລ້ວ, ບັນດາທຸລະກິດທີ່ມີຄວາມສົນໃຈເຂົ້າຮ່ວມ ກໍຈະສົ່ງແບບຟອມສະໝັກບໍ່ວ່າຈະເປັນແບບຟອມທີ່ເປັນເອກະສານ ຫຼື ແບບຟອມທາງອອນລາຍ (ຜ່ານທາງລິ້ງນີ້: https://bit.ly/LLapplicationform ) ເຊິ່ງມີຂໍ້ມູນພື້ນຖານທີ່ຈໍາເປັນເພື່ອຮັບປະກັນຄວາມຖືກຕ້ອງ ແລະ ເພື່ອໃຫ້ມີຂໍ້ມູນຕິດຕໍ່ຂອງຫົວໜ່ວຍທຸລະກິດຄົບຖ້ວນ (ຕົວຢ່າງ: ປະເພດທຸລະກິດ, ຂະແໜງການ, ສະຖານທີ່, ເບີໂທລະສັບ, ອີເມລ ແລະ ອື່ນໆ).

## 2> ຂັ້ນຕອນທີ 2: ສຄອຊ ວາງມາດຕະຖານເງື່ອນໄຂ, ການເຂົ້າລະບົບທາງອອນລາຍ ແລະ ເຄື່ອງມືອື່ນໆ ໃຫ້ແກ່ຫົວໜ່ວຍທຸລະກິດ.

ສຄອຊ ແລະ ສູນສະຫະພາບເອີຣົບດ້ານການທ່ອງທ່ຽວທາງນິເວດ ແລະ ກະສິກໍາ ຫຼື ECEAT (ໄດ້ຮັບການສະໜັບສະໜູນດ້ານວິຊາການຈາກໂຄງການ SUSTOUR ລາວ) ຈະວາງມາດຕະຖານເງື່ອນໄຂ, ວິທີການເຂົ້າລະບົບຂອງ ທຣາເວວໄລຟ໌ (www.Travelife.info) ແລະ ເຄື່ອງມືອື່ນໆ ໃຫ້ແກ່ຫົວໜ່ວຍທຸລະກິດ (ຕົວຢ່າງ: ເອກະສານແນວທາງການປະເມີນ ແລະ ສະແດງການປະຕິບັດງານທີ່ດີເລີດ).

## 3> ຂັ້ນຕອນທີ 3: ບັນດາຫົວໜ່ວຍທຸລະກິດຈະໄດ້ຮັບການຝຶກອົບຮົມ ແລະ ການໃຫ້ຄໍາປຶກສາ (ທາງເລືອກ).

ສໍາລັບທາງເລືອກນີ້, ໂຄງການ SUSTOUR ລາວ ຈະໄດ້ຈັດການຝຶກອົບຮົມເບື້ອງຕົ້ນໃຫ້ແກ່ບັນດາຫົວໜ່ວຍທຸລະກິດກ່ຽວກັບເງື່ອນໄຂ ແລະ ຂັ້ນຕອນການອອກໃບຢັ້ງຢືນແຜນງານ ລາວຍືນຍາວ ປະກອບມີ: ວິທີການນໍາໃຊ້ຊ່ອງທາງອອນລາຍຂອງ ທຣາເວວໄລຟ໌. ສໍາລັບຫົວໜ່ວຍທຸລະກິດທີ່ບໍ່ສາມາດເຂົ້າເຖິງເວັບໄຊ້ ຫຼື ມີຄວາມຫຍຸ້ງຍາກໃນການນໍາໃຊ້ຊ່ອງທາງອອນລາຍ ແມ່ນສາມາດໃຊ້ຮູບແບບການລາຍງານທີ່ເປັນເອກະສານໄດ້. ທີ່ປຶກສາຈາກໂຄງການ SUSTOUR ລາວ ແລະ ສຄອຊ (ໄດ້ຮັບການຝຶກອົບຮົມໂດຍໂຄງການ SUSTOUR ລາວ ທີ່ຜ່ານມາ) ສາມາດໃຫ້ຄໍາປຶກສາແກ່ຫົວໜ່ວຍທຸລະກິດຕາມຄວາມຈໍາເປັນຕະຫຼອດໄລຍະເວລາຂອງຂັ້ນຕອນຂອງເຮັດບົດລາຍງານ. ການໃຫ້ຄໍາປຶກສາມາດເຮັດໄດ້ໂດຍຜ່ານການສື່ສານທາງອອນລາຍ, ໂທລະສັບ ຫຼື ພົບປະຕົວຈິງ (ຈັດຂຶ້ນ ແລະ ຕິດຕາມໂດຍຕົວແທນຂອງໂຄງການ SUSTOUR ລາວ).
ການຝຶກອົບຮົມເບື້ອງຕົ້ນແມ່ນເປັນທາງເລືອກ ແລະ ບໍ່ແມ່ນການບັງຄັບເພື່ອເຮັດໃຫ້ທຸລະກິດທີ່ໄດ້ຮັບການຢັ້ງຢືນຈາກແຜນງານ ລາວຍືນຍາວ. ເຫດຜົນກໍຍ້ອນວ່າ ບາງຫົວໜ່ວຍທຸລະກິດອາດຈະມີຄວາມສາມາດໃນການຜ່ານເຂົ້າໄປດໍາເນີນການຢູ່ໃນຂັ້ນຕອນທີ 4 ແລະ ທີ 5 ໂດຍກົງເລີຍກໍໄດ້ (ການລາຍງານ ແລະ ການປະເມີນ).

## 4> ຂັ້ນຕອນທີ 4: ຫົວໜ່ວຍທຸລະກິດ ສໍາເລັດການລາຍງານພາຍໃນ.

ຫົວໜ່ວຍທຸລະກິດຈະປະຕິບັດຄົບຕາມຂໍ້ກໍານົດການລາຍງານ ໂດຍອີງໃສ່ບັນດາມາດຕະຖານເງື່ອນໄຂຄວາມຍືນຍົງ. ບັນດາຫົວໜ່ວຍທຸລະກິດຈະລາຍງານກ່ຽວກັບການປະຕິບັດຕາມເງື່ອນໄຂມາດຕະຖານຜ່ານທາງການລາຍງານແບບອອນລາຍຂອງ ທຣາເວວໄລຟ໌ ເຊິ່ງຈະເປັນການຕິດຕາມຄວາມຄືບໜ້າ. ການລາຍງານແບບອັອບລາຍ (offline), ຜ່ານບັນດາມາດຕະຖານເງື່ອນໄຂ ແລະ ບົດລາຍງານທີ່ເປັນເອກະສານແມ່ນສາມາດເຮັດໄດ້ ສໍາລັບທຸລະກິດທີ່ບໍ່ສາມາດເຂົ້າເຖິງເວັບໄຊ້ ຫຼື ມີຄວາມຫຍຸ້ງຍາກໃນການນໍາໃຊ້ຊ່ອງທາງອອນລາຍ. ໃນລະຫວ່າງຂັ້ນຕອນການລາຍງານ, ຫົວໜ່ວຍທຸລະກິດສາມາດສະເໜີຂໍການໃຫ້ຄໍາປຶກສາຕາມທີ່ໄດ້ກ່າວໄວ້ໃນຂັ້ນຕອນທີ່ຜ່ານມາ.

## 5> ຂັ້ນຕອນທີ 5: ຫົວໜ່ວຍທຸລະກິດຍື່ນສະໝັກເພື່ອຂໍຮັບການປະເມີນ.

ພາຍຫຼັງທີ່ຫົວໜ່ວຍທຸລະກິດໄດ້ຕື່ມຂໍ້ມູນໃສ່ບັນບັນດາມາດຕະຖານເງື່ອນໄຂແລ້ວ (ບໍ່ວ່າຈະເປັນທາງອອນລາຍ ຫຼື ອັອບລາຍ), ເຂົາເຈົ້າສາມາດຍື່ນສະໝັກເພື່ອຂໍຮັບການປະເມີນໂດຍການສົ່ງຄໍາຮ້ອງສະໝັກຜ່ານທາງອອນລາຍ (ຜ່ານລິ້ງນີ້: https://bit.ly/reqassessment). ສຄອຊ (ໂດຍໄດ້ຮັບການສະໜັບສະໜູນດ້ານວິຊາການຈາກໂຄງການ SUSTOUR ລາວ) ຈະກວດກາຄໍາຮ້ອງສະໝັກ. ຖ້າຫົວໜ່ວຍທຸລະກິດໃດມີຄວາມພ້ອມແລ້ວ, ໂຄງການ SUSTOUR ລາວ ຈະປະສານງານກັບຄືນໄປຫາທຸລະກິດນັ້ນ ແລະ ຜູ້ປະເມີນຈາກ ສຄອຊ ເພື່ອຈັດຕັ້ງການປະເມີນ.

## 6> ຂັ້ນຕອນທີ 6: ສຄອຊ ດໍາເນີນການປະເມີນ.

ຜູ້ຕາງໜ້າຈາກ ສຄອຊ ທີ່ໄດ້ຮັບການຝຶກອົບຮົມຈາກໂຄງການ SUSTOUR ລາວທີ່ຜ່ານມາ ກ່ຽວກັບຂັ້ນຕອນການປະເມີນຈະລົງໄປເຮັດວຽກຢູ່ສະຖານປະກອບການຂອງຫົວໜ່ວຍທຸລະກິດ ແລະ ດໍາເນີນການປະເມີນໂດຍອີງໃສ່ບັນດາມາດຕະຖານເງື່ອນໄຂທີ່ທາງຫົວໜ່ວຍທຸລະກິດໄດ້ຍື່ນມາ. ຜູ້ປະເມີນຈາກ ສຄອຊ ຈະຕ້ອງບໍ່ແມ່ນຄົນດຽວກັບຜູ້ທີ່ໄດ້ໃຫ້ຄໍາປຶກສາແກ່ຫົວໜ່ວຍທຸລະກິດ ທັງນີ້ກໍເພື່ອເປັນການຮັບປະກັນວ່າ ການປະເມີນນັ້ນຍຸຕິທໍາທີ່ສຸດ. ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ SUSTOUR ລາວ, ຜູ້ຕາງໜ້າຈາກໂຄງການ ຈະໄດ້ເຂົ້າຮ່ວມເພື່ອຕິດຕາມທຸກໆການປະເມີນ. ຜູ້ປະເມີນຈະກວດກາຫົວໜ່ວຍທຸລະກິດ ແລະ ສໍາພາດເຈົ້າຂອງທຸລະກິດ, ຜູ້ຈັດການ ແລະ / ຫຼື ພະນັກງານເພື່ອກວດກາຄວາມຖືກຕ້ອງ ແລະ ຄວາມໜ້າເຊື່ອຖືຂອງຂໍ້ມູນທີ່ໄດ້ຮັບຈາກຫົວໜ່ວຍທຸລະກິດ ແລະ ການປະຕິບັດຕາມມາດຕະຖານເງື່ອນໄຂຂອງເຂົາເຈົ້າ. ຜູ້ປະເມີນຈະຕື່ມຂໍ້ມູນໃສ່ບົດລາຍງານການປະເມີນໂດຍຫຍໍ້ (https://bit.ly/llcriteriabvl) ແລ້ວຈະຖືກສົ່ງໄປໃຫ້ໂຄງການ SUSTOUR ລາວ ເພື່ອຢັ້ງຢືນເປັນຄັ້ງສຸດທ້າຍ.

ຜົນຂອງການປະເມີນອາດຈະອອກມາ 3 ດ້ານດັ່ງນີ້:

- **ຫົວໜ່ວຍທຸລະກິດຜ່ານການປະເມີນ ແລະ ໄດ້ຮັບການຢັ້ງຢືນ**: ການປະເມີນເຫັນວ່າ ບັນດາມາດຕະຖານເງື່ອນໄຂທີ່ທາງຫົວໜ່ວຍທຸລະກິດຍື່ນມານັ້ນຖືກຕ້ອງ ແລະ ສະແດງໃຫ້ເຫັນເຖິງການປະຕິບັດຕາມເງື່ອນໄຂຄວາມຍືນຍົງແບບບັງຄັບໄດ້ 100 %. ຫຼັງຈາກນັ້ນ, ຫົວໜ່ວຍທຸລະກິດດັ່ງກ່າວຈະໄດ້ຮັບການຢັ້ງຢືນແຜນງານລາວຍືນຍາວ ເຊິ່ງລວມມີໂລ່ ແລະ ສະຕິກເກີ້ ທີ່ຫົວໜ່ວຍທຸລະກິດສາມາດວາງສະແດງໄວ້ຢູ່ສະຖານປະກອບການ ເຊັ່ນດຽວກັນກັບການສ້າງຄວາມຮັບຮູ້ຜົນສໍາເລັດຂອງເຂົາເຈົ້າ (ຕົວຢ່າງ: ຜ່ານສື່ສັງຄົມອອນລາຍ ຫຼື ງານຕ່າງໆ).

- **ຫົວໜ່ວຍທຸລະກິດທີ່ປະຕິບັດຕາມເງື່ອນໄຂແບບບັງຄັບຢ່າງໜ້ອຍໄດ້ 70% ແມ່ນຈະໄດ້ເວລາຕື່ມອີກ 1 ເດືອນ ເພື່ອປະຕິບັດໃຫ້ໄດ້ຄົບຖ້ວນຕາມເງື່ອນໄຂ**. ຖ້າຫາກເຫັນວ່າຫົວໜ່ວຍທຸລະກິດປະຕິບັດຕາມເງື່ອນໄຂແບບບັງຄັບໄດ້ 70 % ຫຼື ຫຼາຍກວ່ານັ້ນ, ເຂົາເຈົ້າຈະໄດ້ຮັບໄລຍະເວລາຕື່ມອີກ 1 ເດືອນ ເພື່ອປະຕິບັດໃຫ້ໄດ້ຕາມເງື່ອນໄຂທີ່ຍັງເຫຼືອ. ພ້ອມນີ້ຫົວໜ່ວຍທຸລະກິດສາມາດສະແດງໃຫ້ເຫັນເຖິງການປະຕິບັດຕາມເງື່ອນໄຂໄດ້ໂດຍການຍື່ນຫຼັກຖານເພື່ອໃຫ້ຜູ້ປະເມີນເຫັນວ່າເງື່ອນໄຂນັ້ນໄດ້ຖືກປະຕິບັດຄົບຖ້ວນແລ້ວ (ຕົວຢ່າງ: ເອກະສານສະໜັບສະໜູນ, ຮູບພາບ ແລະ ອື່ນໆ). ການປະເມີນຢູ່ສະຖານທີ່ຈິງແບບຕົວຕໍ່ຕົວແມ່ນບໍ່ຈໍາເປັນ. ຖ້າຫົວໜ່ວຍທຸລະກິດສາມາດປະຕິບັດຕາມເງື່ອນໄຂແບບບັງຄັບໄດ້ທັງໝົດພາຍໃນ 1 ເດືອນ, ເຂົາເຈົ້າຈະຜ່ານການປະເມີນ ແລະ ໄດ້ຮັບການຢັ້ງຢືນລາວຍືນຍາວ.

- **ສໍາລັບຫົວໜ່ວຍທຸລະກິດທີ່ບໍ່ຜ່ານການປະເມີນ (ປະຕິບັດຕາມເງື່ອນໄຂໄດ້ໜ້ອຍກວ່າ 70 %) ແມ່ນຈະໄດ້ຮັບຄໍາແນະນໍາເພື່ອໄປປັບປຸງໃນຕໍ່ໜ້າ.** ຖ້າຫາກການປະເມີນເຫັນວ່າ ຫົວໜ່ວຍທຸລະກິດບໍ່ປະຕິບັດຕາມມາດຕະຖານເງື່ອນໄຂຄວາມຍືນຍົງ. ຫົວໜ່ວຍທຸລະກິດນັ້ນຈະໄດ້ຮັບຄໍາຄິດເຫັນກ່ຽວກັບການປະເມີນຂອງເຂົາເຈົ້າ ແລະ ຮັບຄໍາແນະນໍາເພື່ອການປັບປຸງໃນຕໍ່ໜ້າ. ຫຼັງຈາກນັ້ນ, ຫົວໜ່ວຍທຸລະກິດສາມາດປັບປຸງສິ່ງທີ່ເຫັນວ່າຈໍາເປັນ ແລະ ຍື່ນສະໝັກເພື່ອຂໍຮັບການປະເມີນຄືນໃໝ່ຕາມພາຍຫຼັງ.



# ແຜນຮັບມືການແຜ່ລະບາດ ຂອງພະຍາດ COVID-19

## ການຮັບມືຈາກຜົນກະທົບຂອງການແຜ່ລະບາດ ຂອງພະຍາດ COVID-19 ໃນອຸດສາຫະກຳທ່ອງທ່ຽວລາວ

### ແຜນຮັບມື ຮູບແບບທີ 1

ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນອຸດສາຫະກຳທ່ອງທ່ຽວ

1> **ປະເມີນຜົນກະທົບຈາກພະຍາດ** COVID-19 **ທີ່ມີຕໍ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນລາວ** ລວມທັງຂະແໜງການທ່ອງທ່ຽວທີ່ກ່ຽວຂ້ອງ ເຊັ່ນ ການໝູນໃຊ້ຂໍ້ມູນເບື້ອງຕົ້ນເພື່ອປະເມີນຜົນກະທົບ ແລະ ຄວາມຈຳເປັນຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ເຊິ່ງສາມາດນຳໄປຈັດຕັ້ງປະຕິບັດຮ່ວມກັບແຜນຮັບມືຂອງໂຄງການກ່ຽວກັບພະຍາດ COVID-19

2> ປັບປຸງແຜນຈັດຕັ້ງປະຕິບັດວຽກໂຄງການໃນປັດຈຸບັນ ເພື່ອໃຫ້ສອດຄ່ອງກັບການຮັບມືຜົນກະທົບຈາກການແຜ່ລະບາດພະຍາດ COVID-19 ໂດຍລວມເອົາ ຜົນປະໂຫຍດໃນ**ການປະຢັດຕົ້ນທຶນຈາກການຜະລິດ ແລະ ອຸປະໂພກບໍລິໂພກແບບຍືນຍົງ (SCP) ແລະ ການລະບຸຊ່ອງທາງການເຂົ້າເຖິງແຫຼ່ງທຶນຂອງ MSMEs**.

3> ສົ່ງເສີມການປັບປຸງ ແລະ ຈັດຕັ້ງປະຕິບັດ **ມາດຕະຖານດ້ານສຸຂານາໄມ ແລະ ການປ້ອງກັນພະຍາດ** COVID-19, **ແນວທາງ ແລະ ແຜນງານການຢັ້ງຢືນຕ່າງໆ** (ໂດຍອີງໃສ່ມາດຕະຖານສາກົນ ແລະ ມາດຕະຖານວຽກງານທີ່ດີທີ່ສຸດ ທີ່ເຄີຍປະຕິບັດ ໃນໄລຍະຜ່ານມາ) ສຳລັບ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນຂະແໜງການທ່ອງທ່ຽວ.



## ການປ້ອງກັນພະຍາດ COVID-19 ໃນຂະແໜງການທ່ອງທ່ຽວ ແລະ ບໍລິການ

ໂຄງການຈະໃຫ້ຄວາມຊ່ວຍເຫຼືອໃນການສ້າງ ມາດຕະຖານດ້ານສຸຂານາໄມ ແລະ ການປ້ອງກັນການຕິດເຊື້ອພະຍາດ COVID-19 ແລະ ຊ່ວຍເຫຼືອຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ ແລະ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນອຸດສາຫະກຳທ່ອງທ່ຽວປະຕິບັດຕາມມາດຕະຖານທີ່ຖືກສ້າງຂຶ້ນ.



ວຽກງານສຸຂານາໄມ



ວຽກງານປ້ອງກັນພະຍາດ

Travelife CERTIFIED Excellence in sustainability

ປະສົມປະສານເຂົ້າກັບມາດຕະຖານຂອງທຣາເວວໄລຟ໌

## ແຜນຮັບມື ຮູບແບບທີ 2

### ການຟື້ນຟູຄວາມເຊື່ອໝັ້ນ ແລະ ຄວາມຕ້ອງການຂອງຜູ້ອຸປະໂພກບໍລິໂພກ

ລາວທ່ຽວລາວ LAO THIAO LAO

1> **ປັບປຸງກົນໄກການປະສານງານ** ເພື່ອແກ້ໄຂຄວາມຈຳເປັນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນໄລຍະການແຜ່ລະບາດພະຍາດ COVID-19, ປັບປຸງການສື່ສານລະຫວ່າງພາກລັດ ແລະ ພາກເອກະຊົນເພື່ອການຟື້ນຟູ ແລະ ບັນເທົາຜົນກະທົບທີ່ເກີດຂຶ້ນ.

2> **ການຟື້ນຟູຄວາມເຊື່ອໝັ້ນ** ໂດຍການໂຄສະນາເຜີຍແຜ່ ມາດຕະຖານດ້ານສຸຂານາໄມ ແລະ ການປ້ອງກັນການຕິດເຊື້ອພະຍາດ COVID-19 ໃນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນອຸດສາຫະກຳທ່ອງທ່ຽວ, ເຊິ່ງນຳໃຊ້ການຕະຫຼາດແບບດັ້ງເດີມ (ແຜ່ນພັບ ແລະ ໂປສເຕີ) ແລະ ແບບທັນສະໄໝ (ສື່ສັງຄົມອອນລາຍນ໌).

3> **ການຟື້ນຟູຄວາມຕ້ອງການຂອງນັກທ່ອງທ່ຽວຜ່ານການສົ່ງເສີມການທ່ອງທ່ຽວທັງພາຍໃນ ແລະ ພາກພື້ນ**, ເປັນຕົ້ນ ການມີສ່ວນຮ່ວມໃນວຽກງານໂຄສະນາ ລາວ-ທ່ຽວ-ລາວ ແລະ ກຳນົດຍຸດທະສາດການຕະຫຼາດທີ່ເໝາະສົມ, ໂດຍສະເພາະຕະຫຼາດນັກທ່ອງທ່ຽວພາຍໃນ.

## ແຜນຮັບມື ຮູບແບບທີ 3

### ການຮ່ວມມື ລະຫວ່າງ ພາກລັດ-ພາກເອກະຊົນ

1> **ປັບປຸງກົນໄກການປະສານງານ** ເພື່ອແກ້ໄຂຄວາມຈຳເປັນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນໄລຍະການແຜ່ລະບາດພະຍາດ COVID-19, ປັບປຸງການສື່ສານລະຫວ່າງພາກລັດ ແລະ ພາກເອກະຊົນເພື່ອການຟື້ນຟູ ແລະ ບັນເທົາຜົນກະທົບທີ່ເກີດຂຶ້ນ.

2> **ສ້າງຄວາມເຂັ້ມແຂງໃຫ້ແກ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນການໃຫ້ຄວາມຊ່ວຍເຫຼືອແກ່ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ** ທີ່ໄດ້ຮັບຜົນກະທົບຈາກ COVID-19 ແລະ ນຳເອົາຂໍ້ມູນເຫຼົ່ານັ້ນປະກອບໃສ່ແຜນຟື້ນຟູ ແລະ ບັນເທົາຜົນກະທົບຂອງລັດຖະບານ.

3> **ປັບປຸງການຮ່ວມມືໃນລະດັບຊາດ ແລະ ພາກພື້ນ** ທີ່ກ່ຽວຂ້ອງກັບການແລກປ່ຽນຂໍ້ມູນຂ່າວສານ ແລະ ການຮ່ວມມືກັນລະຫວ່າງ ພາກລັດ ແລະ ພາກເອກະຊົນ, ໂດຍສະເພາະ ການປະຕິບັດ ແລະ ການຍັ້ງຢືນມາດຕະຖານດ້ານສຸຂານາໄມ ແລະ ການປ້ອງກັນການຕິດເຊື້ອພະຍາດ COVID-19.



ໃຫ້ສັງເກດເບິ່ງສັນຍະລັກ Travelife ແລະ Lasting Laos ເພື່ອຊອກຫາ
ທຸລະກິດທີ່ໄດ້ຮັບການຢັ້ງຢືນວ່າມີຄວາມຍືນຍົງ!

ນອກຈາກນີ້, ທ່ານຍັງສາມາດກວດສອບໄດ້ວ່າທຸລະກິດໃດແດ່ຢູ່ໃນເຂດຂອງທ່ານ
ໄດ້ຮັບການຢັ້ງຢືນຈາກ Travelife ໂດຍການສະແກນລະຫັດ QR ຂ້າງລຸ່ມນີ້
ຫຼັງຈາກສະແກນແລ້ວ ໃຫ້ເລືອກ (*ປະເທດລາວ*).

Lasting Laos CERTIFIED

Travelife CERTIFIED Excellence in sustainability

travelife.info

@lastinglao

switchasia GRANTS PROGRAMME
Co-funded by the European Union
Travelife Sustainability in tourism
ECEAT European Centre for Eco Agro Tourism
PLAN INTERNATIONAL
LNCCI
MOIC